ສຳນັກງານນາຍົກລັດຖະມົນຕີ

ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມ

ທຸກຍາກແຫ່ງຊາດ (ຄຊພຊ)

---------------------------------------------------

ກອງທຶນຫລຸດຜ່ອນຄວາມທຸກຍາກ

(ທລຍ)

# ບົດວິເຄາະວ່າດ້ວຍ :

# ຄວາມສອດຄ່ອງ, ປະສິດທິພາບ, ປະສິດທິຜົນ, ຜົນກະທົບ ແລະ ຄວາມຍືນຍົງ ຂອງວຽກງານ ທລຍ

(RELEVANCE, EFFECTIVENESS, EFFICIENCY, IMPACT AND SUSTAINABILITY)



**ຄະນະທີ່ປຶກສາ**

ທ່ານ ສີວິໄຊ ໄຊຊະນະວົງເພັດ

ທ່ານ ບຸນກວ້າງ ສຸວັນນະພັນ

**ກວດແກ້:** ທ່ານ ສີວິໄລ ວໍລະຈັກ

**ກະກຽມໂດຍ:**

ທັດທະຈັນ ພົມພັນທະວົງ

------------------------------------


**ຕິດຕໍ່:**

ກອງທຶນຫລຸດຜ່ອນຄວາມທຸກຍາກ(ທລຍ)

ນະຄອນຫລວງວຽງຈັນ

ຕູ້ໄປສະນີ: 4625

ໂທລະສັບ: (856-21)261479/261480

ແຟກ : (856-21)261481

ອີເມລ: prflaos@laotel.com

www.prflaos.org


ບົດລາຍງານຕິດຕາມ-ປະເມີນຜົນ

ທັນວາ 2009

# ສາລະບານ


ບົດສະຫລຸບຫຍໍ້ ........ iii

1. ຄວາມເປັນມາໂດຍຫຍໍ້ ........ 1

2. ຜົນການວິເຄາະແຕ່ລະຕົວຊີ້ວັດ ........ 2

2.1. ຄວາມສອດຄ່ອງ(Relevance) ........ 2

2.2. ປະສິດທິພາບ(Effectiveness) ........ 4

2.3. ປະສິດທິຜົນ(Effciency) ........ 6

2.4. ຜົນກະທົບຂອງໂຄງການ(Impacts) ........ 7

2.4.1 ດ້ານຄົມຄະມະນາຄົມ ........ 8

2.4.2 ການຈັດຫານ້ຳສະອາດ ........ 8

2.4.3 ສຸກສາລາ ........ 8

2.4.4 ດ້ານການສຶກສາ ........ 9

2.4.5 ລະບົບຊົນລະປະທານ ........ 9

2.4.6 ສິ່ງແວດລ້ອມ ........ 9

2.5. ຄວາມຍືນຍົງຂອງໂຄງການ(Sustainability) ........ 10

3. ບົດສະຫລຸບ ແລະ ຄຳສະເໜີ ........ 11

3.1. ບົດສະຫລຸບຫຍໍ້ ........ 11

3.2. ບາງຂໍ້ສະເໜີ ........ 12


# ສາລະບານຕາຕະລາງ


ຕາຕະລາງ1: ຕົວຊີ້ວັດສຳລັບການປະເມີນຜົນໄດ້ຮັບຂອງໂຄງການ ........ 1

ຕາຕະລາງ 2: ຈຳນວນໂຄງການ, ຜູ້ຈັດຕັ້ງປະຕິບັດ, ງົບປະມານ ແລະການປະກອບສ່ວນຂອງຊຸມຊົນ(6 ຮອບວຽນ, ແຕ່ 2003 ຫາ 2009) ........ 5

ຕາຕະລາງ 3: ການສົມທຽບຕົ້ນທຶນຂອງ ທລຍ ກັບຂະແໜງການອື່ນໆໃນລາວ ........ 6

# ບົດສະຫລຸບຫຍໍ້

ຜົນໄດ້ຮັບຕະຫລອດການຈັດຕັ້ງປະຕິບັດວຽກງານຂອງ ທລຍ ຖືວ່າເປັນປັດໃຈນຶ່ງທີ່ສຳຄັນໃນການປະກອບສ່ວນເຂົ້າໃນວຽກງານພັດທະນາເສດຖະກິດສັງຄົມແຫ່ງ ສ ປ ປ ລາວ. ໃນທົດສະວັດ (2003-2009) ທລຍ ໄດ້ໃຫ້ການຊ່ວຍເຫລືອຊາວບ້ານທີ່ທຸກຍາກທັງໝົດເປັນ 2,422 ໂຄງການ, ນຳໃຊ້ງົບປະມານທັງໝົດປະມານ 208 ຕື້ກີບ ແລະ ທຶນປະກອບສ່ວນຈາກຊຸມຊົນຈຳນວນ 42 ຕື້ກີບ. ໃນຈຳນວນໂຄງການທັງໝົດນັ້ນເປັນໂຄງການກໍ່ສ້າງພື້ນຖານໂຄງລ່າງ ຈຳນວນ 1,922 ໂຄງການ ເຊິ່ງກວມເອົາດ້ານການສຶກສາ, ສາທາລະນະສຸກ, ໂຍທາທິການ ແລະ ກະສິກຳ. ສ່ວນທີ່ເຫລືອ 500 ໂຄງການ ແມ່ນກ່ຽວກັບວຽກຝຶກອົບຮົມເພື່ອສ້າງຄວາມເຂັ້ມແຂງແກ່ອຳນາດການປົກຄອງທ້ອງຖິ່ນ, ຝຶກອົບ ຮົມວິຊາຊີບ ແລະ ວຽກງານປົກປັກຮັກສາສິ່ງແວດລ້ອມ.

ພ້ອມດຽວກັນນັ້ນກໍ່ສັງເກດເຫັນວ່າມີ 1,611 ໂຄງການ ຫລື 66.5 % ຂອງຈຳນວນໂຄງການທັງໝົດແມ່ນໄດ້ຖືກຈັດຕັ້ງປະຕິບັດໂດຍຊຸມຊົນ ຊຶ່ງເປັນຫລັກຖານວ່າປະຊາຊົນໄດ້ເຂົ້າຮ່ວມ ແລະ ເປັນການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນຢ່າງແທ້ຈິງ, ການສ້າງຂີດຄວາມສາມາດໃຫ້ເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນຢູ່ໃນໝູ່ບ້ານດ້ວຍຕົນເອງ ຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສ ເປັນຫລັກການເຄື່ອນໄຫວ ວຽກງານໃນແຕ່ລະຂະແໜງການທີ່ ທລຍ ໄດ້ໃຫ້ການສະໜັບສະໜູນ ຖືວ່າຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງພໍ່ແມ່ປະຊາຊົນ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນ.

ບົດລາຍງານສະບັບນີ້ແມ່ນການນຳໃຊ້ຕົວຊີ້ວັດ ສຳລັບການປະເມີນໂຄງການ ເພື່ອເປັນວິເຄາະ ແລະ ຊອກຫາຄຳຕອບໃນເຊີງວິຊາການໃຫ້ກັບສັງຄົມກ່ຽວກັບຜົນໄດ້ຮັບລວມຂອງວຽກງານ ທລຍ. ບັນດາຕົວຊີ້ວັດທີ່ໄດ້ຖືກນຳໃຊ້ໃນຄັ້ງນີ້ແມ່ນປະກອບດ້ວຍຄວາມສອດຄ່ອງ (Relevance), ປະສິດທິພາບ (Effectiveness), ປະສິດທິຜົນ(Efficiency), ຜົນກະທົບ (impact) ແລະ ຄວາມຍືນຍົງ (sustainability). ທັງໝົດຕົວຊີ້ວັດດັ່ງກ່າວແມ່ນຈະເປັນອົງປະກອບສຳຄັນ ເພື່ອການຕິດຕາມ ແລະ ປະເມີນຜົນໄດ້ຮັບລວມຂອງໂຄງການ ເພື່ອຊີ້ວັດ 4 ອົງປະກອບຂອງການລົງທຶນຄື: ປັດໃຈການຜະລິດ (input), ຜົນໄດ້ຮັບ (output), ຄາດໝາຍຂອງໂຄງການ (project purpose) ແລະ ຄາດໝາຍລວມລະດັບຊາດ (overall goal).

# 1. ຄວາມເປັນມາໂດຍຫຍໍ້

ຕະຫຼອດໄລຍະເວລາ 6 ປີ ແຫ່ງການຈັດຕັ້ງປະຕິບັດວຽກງານຂອງ ທລຍ, ຫຼາກຫຼາຍກິດຈະກຳທີ່ໂຄງການ ດັ່ງກ່າວໄດ້ເຄື່ອນໄຫວເພື່ອຊຸກຍູ້ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດເປົ້າໝາຍ. ຕົກມາຮອດປະຈຸບັນຫຼາຍຄຳຖາມແມ່ນໄດ້ຖືກຕັ້ງຂຶ້ນກ່ຽວກັບປະສິດທິພາບຂອງການລົງທຶນວ່າສອດຄ່ອງກັບຈຸດປະສົງຂອງການລົງທຶນຫຼາຍພຽງໃດແທ້. ເພື່ອຊອກຫາຄຳຕອບທີ່ສົມເຫດສົມຜົນເຮົາສາມາດອີງໃສ່ບັນດາຕົວຊີ້ວັດດັ່ງຕໍ່ໄປນີ້:

ຕາຕະລາງ1: ຕົວຊີ້ວັດສຳລັບການປະເມີນຜົນໄດ້ຮັບຂອງໂຄງການ

<table>
<tr><th></th><th>ຄວາມສອດຄ່ອງ (Relevance)</th><th>ປະສິດທິພາບ (effectiveness)</th><th>ປະສິດທິຜົນ (efficiency)</th><th>ຜົນກະທົບ (impact)</th><th>ຄວາມຍືນຍົງ (sustainability)</th></tr>
<tr><td>ຄາດໝາຍລວມ (overall goal)</td><td style="background:#1f497d"></td><td></td><td></td><td style="background:#1f497d"></td><td style="background:#1f497d"></td></tr>
<tr><td>ເປົ້າໝາຍຂອງໂຄງການ (Project purpose)</td><td style="background:#1f497d"></td><td style="background:#1f497d"></td><td></td><td style="background:#1f497d"></td><td style="background:#1f497d"></td></tr>
<tr><td>ຜົນໄດ້ຈາກການລົງທຶນ (outputs)</td><td></td><td style="background:#1f497d"></td><td style="background:#1f497d"></td><td></td><td style="background:#1f497d"></td></tr>
<tr><td>ການລົງທຶນ (inputs)</td><td></td><td></td><td style="background:#1f497d"></td><td></td><td style="background:#1f497d"></td></tr>
</table>

ຂໍ້ມູນ: Project Cycle Management, FASID 2008

ທັງຫ້າຕົວຊີ້ວັດເຊິ່ງປະກອບດ້ວຍຄວາມສອດຄ່ອງຂອງນະໂຍບາຍຂອງ ໂຄງການຕໍ່ແນວທາງພັດທະນາຂອງລັດຖະບານ (Relevance), ປະສິດທິພາບ (Effectiveness), ປະສິດທິຜົນ(Efficiency), ຜົນກະທົບ(impact) ແລະ ຄວາມຍືນຍົງ(sustainability). ທັງໝົດຕົວຊີ້ວັດທີ່ ກ່າວມານີ້ແມ່ນຈະເປັນອົງປະກອບສຳຄັນ ເພື່ອການຕິດຕາມ ແລະ ປະເມີນຜົນໄດ້ຮັບລວມຂອງໂຄງການ ເພື່ອຊີ້ວັດສີ່ອົງປະກອບຂອງການລົງທຶນຄື: ປັດໃຈການລົງທຶນ(input), ຜົນໄດ້ຈາກການລົງທຶນ(output), ຄາດໝາຍ ຂອງໂຄງການ (project purpose) ແລະ ຄາດໝາຍລວມລະດັບຊາດ (overall goal).

## 2. ຜົນການວິເຄາະແຕ່ລະຕົວຊີ້ວັດ

ສໍາລັບລາຍລະອຽດ ຂອງວຽກງານ ທລຍ ເຮົາສາມາດນໍາໃຊ້ຕົວຊີ້ວັດດັ່ງກ່າວເພື່ອປະເມີນຜົນໄດ້ຮັບລວມໄດ້ດັ່ງນີ້:

### 2.1. ຄວາມສອດຄ່ອງ(Relevance)

ຕົວຊີ້ວັດນີ້ແມ່ນນໍາໃຊ້ເພື່ອປະເມີນສາຍພົວພັນລະຫວ່າງຈຸດປະສົງກໍ່ຄືຄາດໝາຍຂອງໂຄງການ ແລະ ຜົນໄດ້ຮັບໂດຍລວມ (overall goal) ເພາະສິ່ງດັ່ງກ່າວແມ່ນມີຄວາມສໍາຄັນ ເພື່ອເປັນແຮງກະຕຸ້ນໃຫ້ແກ່ຂະບວນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນການປະກອບສ່ວນເຂົ້າໃນເປົ້າໝາຍສະຫັດສະວັດແຫ່ງການພັດທະນາ (Millennium Development Goal) ກໍ່ຄືຄວາມສູ້ຊົນຂອງລັດຖະບານ ເພື່ອໃຫ້ ສ ປ ປ ລາວ ຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ ໃນປີ 2020, ເປົ້າ ໝາຍຫລັກກໍແມ່ນ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂື້ນ. ສະນັ້ນ, ບັນຫານີ້ເຮົາຈະສຶກສາເບິ່ງວ່າຜ່ານ ການຈັດຕັ້ງປະຕິບັດວຽກງານຂອງ ທລຍ ນັ້ນພວກເຮົາ ສາມາດບັນລຸເປົ້າໝາຍຂອງໂຄງການທີ່ໄດ້ກໍານົດໄວ້ ຫຼື ບໍ່?. ພ້ອມນັ້ນກໍຍັງສຶກສາເບິ່ງວ່າຜົນໄດ້ຮັບດັ່ງກ່າວສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມກໍ່ຄືແຜນການພັດທະນາຊົນນະບົດ ແລະການລົບລ່າງຄວາມທຸກຍາກແຫ່ງຊາດຂອງລັດຖະບານໃນລະດັບໃດ.

ຕະຫຼອດການເຄື່ອນໄຫວແຕ່ເລີ່ມຕົ້ນໂຄງການແຕ່ປີ 2003 ເຖິງປະຈຸບັນ ທລຍ ຖືວ່າເປັນອົງການຈັດຕັ້ງໜຶ່ງທີ່ມີບົດບາດສໍາຄັນໃນຍຸດທະສາດແຫ່ງການພັດທະນາ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES), ພ້ອມດຽວກັນນັ້ນ ທລຍ ກໍ່ໄດ້ກາຍມາເປັນພາກສ່ວນໜຶ່ງທີ່ສໍາຄັນຂອງຂະບວນການພັດທະນາຊົນນະບົດ ແລະ ການລຶບລ້າງຄວາມທຸກຍາກແຫ່ງຊາດຂອງ ສປປລາວ. ເພາະ ທລຍ ໄດ້ສຸມຄວາມພະຍາຍາມ ເພື່ອສະໜັບສະໜູນຂະບວນການແຫ່ງການພັດທະນາເສດຖະກິດສັງຄົມຂອງລັດຖະບານເພື່ອໃຫ້ປະເທດຊາດຫຼຸດອອກຈາກລາຍຊື່ຂອງປະເທດດ້ອຍພັດທະນາ. ຄາດໝາຍຫຼັກຂອງ ທລຍ ແມ່ນ ເພື່ອປັບປຸງຊີວິດການເປັນຢູ່ຂອງຊຸມຊົນທຸກຍາກ ໂດຍອີງໃສ່ 3 ຈຸດປະສົງຫຼັກຄື:

1) ຊ່ວຍເຫລືອຊາວບ້ານໃນການພັດທະນາໂຄງລ່າງຂະໜາດນ້ອຍ ແລະ ໃຫ້ເຂົາເຈົ້າໄດ້ຮັບການບໍລິການດ້ານຕ່າງໆຕາມຄວາມຈໍາເປັນ ແລະ ເໝາະສົມ;
2) ສ້າງຂີດຄວາມສາມາດ ເພື່ອມອບສິດໃຫ້ຊາວບ້ານທຸກຍາກເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນ ຢູ່ໃນໝູ່ບ້ານດ້ວຍຕົນເອງຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສເປັນຫລັກ ແລະ;

3) ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນທ້ອງຖິ່ນ, ສະໜັບສະໜູນຂະບວນການຕັດສິນໃຈ ແລະ ການແກ້ໄຂຂໍ້ຂັດແຍ່ງແບບມີສ່ວນຮ່ວມຕັ້ງແຕ່ຂັ້ນບ້ານ, ກຸ່ມບ້ານ ແລະ ເມືອງ ໂດຍໃຫ້ມີສ່ວນກ່ຽວ ຂ້ອງຢ່າງກ້ວາງຂວາງຂອງຊາວບ້ານ, ໂດຍສະເພາະບ້ານທຸກຍາກ ທີ່ປະກອບດ້ວຍ ຊົນເຜົ່າຕ່າງໆ ແລະເພດຍິງ.

**ວິໃສທັດຂອງ ທລຍ:** "ຕອບສະໜອງແນວທາງນະໂຍບາຍຂອງພັກ ໃນການສ້າງຄວາມເຂັ້ມແຂງ, ຄວາມສາມາດໃຫ້ແກ່ຊຸມຊົນທີ່ຢູ່ໃນເຂດຫ່າງໄກສອກຫລີກ ໂດຍເຮັດວຽກຄຽງບ່າຄຽງໄຫລ່ກັນ ເພື່ອໃຫ້ມີຊີວິດການເປັນຢູ່ຂອງປະຊາຊົນທີ່ດີຂຶ້ນທັງໃນປັດຈຸບັນ ແລະ ອະນາຄົດ "

ສິ່ງພົ້ນເດັ່ນທີ່ສະແດງເຖິງຜົນໄດ້ຮັບຂອງ ທລຍ ແມ່ນຫຼັງຈາກສຳເລັດໂຄງການໃນໄລຍະທຳອິດ (2003-2008), ຖືວ່າ ທລຍ ສາມາດບັນລຸຈຸດປະສົງ ແລະ ຄາດໝາຍຫຼາຍໆຢ່າງ ຂອງໂຄງການໄດ້ ສະນັ້ນ ທລຍ ຈິ່ງໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກລັດຖະບານລວມທັງຜູ້ໃຫ້ທຶນ, ອະນຸມັດໃນການສືບຕໍ່ໂຄງການແຕ່ປີ 2008 ຫາ 2011 ຖືວ່າເປັນຫລັກຖານທີ່ສຳຄັນທີ່ສະແດງເຖິງຜົນສຳເລັດຂອງວຽກງານ ທລຍ ໃນໄລຍະເລີ່ມຕົ້ນເຖິງປະຈຸບັນ. ເຊິ່ງແມ່ນທຶນສົມທົບໃນຮູບແບບທຶນຊ່ວຍເຫຼືອລ້າຈາກທະນາຄານໂລກ ແລະ ທຶນພັດທະນາຈາກປະເທດສະວິດເຊີແລນເປັນທຶນທັງໝົດ 20 ລ້ານໂດລາສະຫະລັດ. ຕະຫລອດໄລຍະຂອງການຈັດຕັ້ງປະຕິບັດວຽກງານ ທລຍ, ເຮົາສາມາດເວົ້າໄດ້ວ່າໂຄງການທັງໝົດທີ່ ໄດ້ຮັບທັງທາງດ້ານການກໍ່ສ້າງພື້ນຖານໂຄງລ່າງ ແລະ ດ້ານການຝຶກອົບຮົມເສີມສ້າງຄວາມເຂັ້ມແຂງ ແມ່ນສາມາດປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃຫ້ດີຂຶ້ນ ແລະ ອຳນວຍຄວາມສະດວກໃຫ້ແກ່ເຂົ້າເຈົ້າຫຼາຍທີ່ສຸດ ເພາະທຸກໂຄງການທີ່ໄດ້ຖືກຈັດຕັ້ງປະຕິບັດແມ່ນຊຸມຊົນ ໄດ້ສະເໜີມາແຕ່ຂັ້ນບ້ານ ແລະ ຖືວ່າເປັນຄວາມຈຳເປັນໃນຂັ້ນບ້ານແທ້ໆ.

ອີກບັນຫາໜຶ່ງສຳຫຼັບຈຸດປະສົງທີສອງໂຄງການຄືການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ, ຕໍ່ບັນຫາດັ່ງກ່າວ ທລຍ ໄດ້ໃຫ້ໂອກາດຊາວບ້ານໃຫ້ມີສ່ວນໃນການຈັດຕັ້ງປະຕິບັດວຽກງານ ທລຍ ຫຼາຍທີ່ສຸດ ໂດຍສະເພາະແມ່ນການເຄື່ອນໄຫວວຽກງານໃນຂັ້ນທ້ອງຖິ່ນຂອງເຂົາເຈົ້າ ເປັນຕົ້ນແມ່ນສິດໃນການອອກຄຳຄິດເຫັນ, ເລືອກ, ຕັດສິນໃຈ ແລະ ຈັດຕັ້ງປະຕິບັດໂຄງການ. ໂດຍລວມແລ້ວສາມາດເວົ້າໄດ້ວ່າການຈັດຕັ້ງປະຕິບັດບັນດາກິດຈະກຳ (ໂຄງການ) ທີ່ສະໜັບໜູນຈາກກອງທຶນຫລຸດຜ່ອນຄວາມທຸກຍາກ ໃນໄລຍະຜ່ານມາ ແມ່ນອີງໃສ່ການຕັດສິນໃຈ ແລະ ມອບຄວາມຮັບຜິດຊອບໃຫ້ຊາວບ້ານ, ເຊິ່ງເປັນການສ້າງໂອກາດໃຫ້ແກ່ຊາວບ້ານມີທາງເລືອກ ກ່ຽວກັບປະເພດຂອງໂຄງການ ແລະຂໍ້ສະເໜີຕ່າງໆ, ບໍ່ພຽງແຕ່ເທົ່ານັ້ນ ທລຍ ຍັງໄດ້ສ້າງເງື່ອນໄຂ ແລະອຳນວຍຄວາມສະດວກໃຫ້ຊາວບ້ານຄັດເລືອກຈັດຕັ້ງປະຕິບັດ ໂຄງການຍ່ອຍດ້ວຍຕົນເອງເຊັ່ນ: ການເຮັດສັນຍາກັບຜູ້ຮັບເໝົາ ແລະ ຊາວບ້ານກໍຍັງເປັນຜູ້ຄວບຄຸມການເບີກຈ່າຍເງິນ

ໃຫ້ແກ່ຜູ້ຮັບເໝົາກໍ່ສ້າງໂດຍກົງ. ບັນດາກິດຈະກຳທີ່ຂັບເຄື່ອນໂດຍຊຸມຊົນທີ່ກ່າວມາຂ້າງເທິງນັ້ນ ຍັງບໍ່ມີອົງການໃດໆໃນ ສປປ ລາວ ຈັດຕັ້ງ ປະຕິບັດມາກ່ອນເລີຍ.

ທຸກຂະບວນການຕັດສິນໃຈກໍຄືການຈັດຕັ້ງປະຕິບັດວຽກງານເປັນຕົ້ນແມ່ນການພິຈາລະນາ ແລະ ການຈັດລຽງບູລິມະສິດຂອງ ທລຍ ແມ່ນສາມາດຕອບສະໜອງໄດ້ຄວາມຕ້ອງການຂັ້ນພື້ນຖານຂອງຊຸມຊົນໄດ້ທຸກໂຄງການຍ່ອຍທີ່ ທລຍ ໄດ້ໃຫ້ການສະໜັບສະໜູນແມ່ນສາມາດຕອບສະໜອງຄວາມຕ້ອງການ ແລະ ກໍ່ແມ່ນຜົນປະໂຫຍດລວມຂອງຊຸມຊົນຢູ່ໃນເຂດເປົ້າໝາຍທີ່ຍັງຂາດແຄນບໍລິການ ທາງດ້ານພື້ນຖານໂຄງລ່າງ ໂດຍສະເພາະແມ່ນໃນເຂດທຸລະກັນດານ. ສະນັ້ນສາມາດສະຫຼຸບໄດ້ວ່າຈຸດປະສົງ ແລະ ຄາດໝາຍລວມຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກແມ່ນສາມາດກະຕຸກຊຸກຍູ້ວຽກງານລວມ ຂອງລັດຖະບານໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ໂດຍຜ່ານຂະບວນການກະຈາຍອຳນາດ ແລະ ມອບສິດໃຫ້ແກ່ປະຊາຊົນໃນທ້ອງຖິ່ນ, ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າມາມີສ່ວນຮ່ວມໃນ ຂະບວນການພັດທະນາ, ວາງແຜນ ແລະ ຈັດຕັ້ງປະຕິບັດດ້ວຍຕົວຂອງເຂົາເຈົ້າເອງ, ທັງນີ້ກໍ່ເພື່ອໃຫ້ເຂົາເຈົ້າສາມາດເພິ່ງຕົນເອງ, ກຸ້ມຕົວເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົວຂອງເຂົ້າເຈົ້າເອງ.

## 2.2. ປະສິດທິພາບ (Effectiveness)

ເພື່ອພິຈາລະນາວ່າຜ່ານການເຄື່ອນໄຫວວຽກງານຂອງ ທລຍ ນັ້ນສາມາດບັນລຸຄາດໝາຍ ທີ່ໄດ້ກຳນົດໄວ້ໃນແຕ່ເບື້ອງຕົ້ນ ເປັນຕົ້ນແມ່ນການປະເມີນປະສິດທິພາບຂອງໂຄງການແມ່ນມີຄວາມຈຳເປັນທີ່ຕ້ອງມີການສຶກສາລະຫວ່າງຜົນໄດ້ຮັບ ແລະ ຄາດໝາຍຂອງໂຄງການ. ເພື່ອສຶກສາເບິ່ງວ່າຜົນໄດ້ຮັບທັງໝົດສາມາດເຮັດໃຫ້ ທລຍ ບັນລຸຈຸດປະສົງທີ່ຕັ້ງໄວ້ຫລືບໍ່. ຜົນໄດ້ຮັບທັງໝົດ (outputs) ທີ່ ທລຍ ໄດ້ໃຫ້ການສະໜັບສະໜູນແມ່ນປະກອບໄປດ້ວຍສິ່ງທີ່ເປັນວັດຖຸ (visible) ທີ່ສາມາດເຫັນໄດ້ ເປັນຕົ້ນແມ່ນບັນດາໂຄງການທີ່ກ່ຽວຂ້ອງກັບວຽກງານການກໍ່ສ້າງໂຄງການຍ່ອຍ ແລະ ຜົນໄດ້ຮັບຈາກການຝຶກ ອົບຮົມ (invisible) ເປັນຕົ້ນແມ່ນຄວາມຮູ້ ແລະ ສະຕິປັນຍາທີ່ຊຸມຊົນໄດ້ຮັບ ລວມເຖິງທີມງານ ທລຍ ທຸກຄົນທຸກຂັ້ນທີ່ໄດ້ຜ່ານການເຮັດວຽກນຳ ທລຍ ຕະຫຼອດໄລຍະເວລາຂອງໂຄງການ.

ຕະຫຼອດໄລຍະ 6 ປີ (2003-2009), 2422 ໂຄງການຍ່ອຍທີ່ ທລຍ ໄດ້ໃຫ້ການສະໜັບສະໜູນໃນນັ້ນເປັນໂຄງການທີ່ກ່ຽວຂ້ອງກັບວຽກງານການກໍ່ສ້າງຈຳນວນ 1922 ໂຄງການ ແລະ ທີ່ເຫຼືອແມ່ນໂຄງການທີ່ກ່ຽວຂ້ອງ ກັບວຽກງານການຝຶກອົບຮົມ. 66.5% ຂອງຈຳນວນໂຄງການ ທັງໝົດແມ່ນຖືກຈັດຕັ້ງປະຕິບັດໂດຍ ຊຸມຊົນເອງ. ສຳລັບງົບປະມານ ແລະ ຈຳນວນໂຄງການ ທັງໝົດລວມທັງມູນຄ່າປະກອບສ່ວນຂອງຊຸມຊົນແມ່ນເບິ່ງໃນຕາຕະລາງ 2 ຂ້າງລຸ່ມນີ້:

ຕາຕະລາງ 2: ຈຳນວນໂຄງການ, ຜູ້ຈັດຕັ້ງປະຕິບັດ, ງົບປະມານ ແລະການປະກອບສ່ວນຂອງຊຸມຊົນ(6 ຮອບວຽນ, ແຕ່ 2003 ຫາ 2009)

| ຂະແໜງການ | ໂຄງການຍ່ອຍ | ຈັດຕັ້ງປະຕິບັດໂດຍ | | | ທຶນ ທລຍ | ທຶນປະກອບສ່ວນຂອງຊຸມຊົນ |
|---|---|---|---|---|---|---|
| | | ຊຊ | ຊຊ+ຜໝ | ຜໝ | | |
| ສຶກສາ | 646 | 439 | 16 | 190 | 3,513,925,959 | 8,115,595,600 |
| ໂຍທາທິການ ແລະ ພະລັງງານ | 509 | 137 | 111 | 261 | 75,934,857,743 | 21,771,536,842 |
| ສາທາ ແລະ ນ້ຳສະອາດ | 637 | 470 | 2 | 162 | 5,340,095,765 | 9,202,158,845 |
| ດ້ານກະສິກຳ | 130 | 82 | 3 | 44 | 8,562,271,429 | 2,591,965,609 |
| ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ | 500 | 483 | 2 | 18 | 14,291,427,214 | 514,724,583 |
| **Total** | **2,422** | **1,611** | **134** | **675** | **207,642,578,110** | **42,195,981,479** |
| | 249,838,559,589 | 66.5% | 5.5% | 27.9% | 83% | 17% |

ຂໍ້ມູນ: ໜ່ວຍງານຕິດຕາມປະເມີນຜົນຂັ້ນສູນກາງປະຈຳເດືອນສິງຫາ 2009

ພວກເຮົາສາມາດສະຫລຸບໄດ້ວ່າບັນດາໂຄງການທີ່ ທລຍ ໄດ້ໃຫ້ການສະໜັບສະໜູນແມ່ນສາມາດອຳນວຍຄວາມສະດວກຢ່າງຫລວງຫລາຍໃຫ້ແກ່ຊຸມຊົນໃນເຂດເປົ້າໝາຍ ເຊັ່ນ: ການສະໜອງນ້ຳສະອາດແມ່ນສາມາດຫລຸດຜ່ອນ ໂລກລະບາດທີ່ເຄີຍເກີດໃນໄລຍະຜ່ານມາຈາກການດື່ມນ້ຳບໍ່ສະອາດ ພ້ອມດຽວກັນນັ້ນກໍ່ສາມາດປະຢັດໄລຍະເວລາຂອງແມ່ຍິງ ແລະ ເດັກນ້ອຍໃນການລຳລຽງນ້ຳເພື່ອການຊົມໃຊ້ ແລະ ບໍລິໂພກ ຂອງຄົວເຮືອນ, ການສະໜອງຊົນລະປະທານແມ່ນສາມາດເພີ່ມຜົນຜະລິດທາງດ້ານກະສິກຳໃຫ້ແກ່ຊຸມຊົນ ແລະ ເຮັດໃຫ້ເຂົາເຈົ້າມີລາຍຮັບເພີ່ມຂຶ້ນ, ການກໍ່ສ້າງໂຮງຮຽນ ແລະ ອຸປະກອນການສຶກສາແມ່ນສາມາດເຮັດໃຫ້ເດັກນ້ອຍໃນເກນອາຍຸເຂົ້າໂຮງຮຽນມີໂອກາດໄດ້ເຂົ້າຮຽນເປັນຜົນເຮັດໃຫ້ອັດຕາການກືກໜັງ ສືຫລຸດລົງ, ການສະໜອງເສັ້ນທາງ ແລະ ຂົວແມ່ນສາມາດເຮັດໃຫ້ຊຸມຊົນໃນເຂດທຸລະກັນດານສາມາດ ເຂົ້າເຖິງການບໍລິການທາງດ້ານຕ່າງໆໄດ້ສະດວກຂື້ນ ພ້ອມນັ້ນກໍ່ສາມາດນຳຜົນຜະລິດອອກມາຂາຍໄດ້ເຮັດໃຫ້ເຂົາເຈົ້າມີລາຍຮັບເພີ່ມຂື້ນ ແລະ ສຳລັບການສະໜອງກິດຈະກຳກ່ຽວກັບການຝຶກອົບຮົມກ່ຽວກັບວຽກງານກິດຈະກຳສ້າງລາຍຮັບເປັນຕົ້ນແມ່ນການຝຶກອົບຮົມວິຊາຊີບແມ່ນເຮັດໃຫ້ຊຸມຊົນມີຄວາມຮູ້ຄວາມສາມາດ ແລະ ຜັນຂະຫຍາຍໄປນຳໃຊ້ໃນຊຸມຊົນຂອງເຂົາເຈົ້າເອງຕາມຫົວຂໍ້ຕ່າງໆທີ່ໄດ້ຮັບການຝຶກອົບຮົມ.

## 2.3. ປະສິດທິຜົນ(Efficiency)

ເພື່ອປະເມີນປະສິດທິຜົນຂອງການລົງທຶນຂອງວຽກງານ ທລຍ ແມ່ນສາມາດສຶກສາ ເບິ່ງຜົນໄດ້ຮັບທັງໝົດຈາກການລົງທຶນ ແລະ ປັດໃຈການຜະລິດທັງໝົດ ເປັນຕົ້ນແມ່ນຕົ້ນທຶນທີ່ຖືກນຳໃຊ້ເພື່ອໃຫ້ໄດ້ມາຊຶ່ງຜົນຜະລິດກໍ່ຄືຜົນໄດ້ຮັບໃນແຕ່ລະຂະແໜງການ. ເພື່ອເປັນການສຶກສາປະສິດທິຜົນຂອງການລົງທຶນຂອງວຽກງານ ທລຍ ພວກເຮົາສາມາດຄົ້ນຄວ້າເບິ່ງມູນຄ່າຂອງການລົງທຶນໃນແຕ່ລະຂະແໜງການທີ່ ທລຍ ໄດ້ໃຫ້ການສະໜັບສະໜູນ ທຽບກັບການລົງທຶນຂອງຂະແໜງການອື່ນໆ ໂດຍສະເພາະແມ່ນບັນດາໂຄງການທີ່ກ່ຽວຂ້ອງກັບວຽກງານການກໍ່ສ້າງໃນແຕ່ລະຂະແໜງການ. ລາຍລະອຽດຂອງການລົງທຶນຕໍ່ຫົວໜ່ວຍຂອງແຕ່ລະອົງການຈັດຕັ້ງໃນ ສ ປ ປ ລາວ ສາມາດເບິ່ງໄດ້ໃນຕາຕະລາງລຸ່ມນີ້:

ຕາຕະລາງ 3: ການສົມທຽບຕົ້ນທຶນຂອງ ທລຍ ກັບຂະແໜງການອື່ນໆໃນລາວ

| ປະເພດໂຄງການ | ຫົວໜ່ວຍ | ອົງການລົງທຶນຢູ່ລາວ | ຕົ້ນທຶນ (US$) |
|---|---|---|---|
| ທາງຊົນນະບົດ | ຕໍ່ກມ | ທລຍ | 1,714 - 2,500 |
| (ທາງກວຽນ) | ຕໍ່ກມ | ADB | 4,591- 7,518 |
| | ຕໍ່ກມ | SIDA | 7,000 |
| | ຕໍ່ກມ | SRNP | 10,000 |
| ທໍ່ລອດທາງ | ຊິ້ນ | ທລຍ | 50 |
| | ຊິ້ນ | CRWRC | 112 |
| | ຊິ້ນ | SIDA | 90 |
| ກໍ່ສ້າງໂຮງຮຽນ | ຕໍ່ຕາແມັດ | ທລຍ | 65 |
| | ຕໍ່ຕາແມັດ | ADB(GEP) | 96 |
| | ຕໍ່ຕາແມັດ | ທະນາຄານໂລກ | 62 |
| | ຕໍ່ຕາແມັດ | ADB(IP) | 115 |
| ຝາຍກັ້ນນໍ້າ | ຕໍ່ແມັດກ້ອນ | ທລຍ | 494 |
| | ຕໍ່ແມັດກ້ອນ | ADB | 1889 |

ຂໍ້ມູນ: Community Driven Approaches in Laos, World Bank 2008

ຈາກຕາຕະລາງຂ້າງເທິງເຮົາສາມາດສົມທຽບລະຫວ່າງຕົ້ນທຶນຕໍ່ຫົວໜ່ວຍສຳລັບການກໍ່ສ້າງໃນແຕ່ລະກິດຈະກຳຂອງແຕ່ລະອົງການຈັດຕັ້ງໃນ ສປປ ລາວ. ໂດຍສະເລ່ຍແລ້ວເຫັນວ່າຕົ້ນທຶນຕໍ່ຫົວໜ່ວຍທີ່ ທລຍ ໄດ້ໃຫ້ການສະໜັບສະໜູນແມ່ນຕໍ່າກວ່າຂະແໜງການອື່ນໆ ທັງນີ້ກໍ່ຍ້ອນວ່າບູລິມະສິດຫລັກຂອງ ທລຍ ແມ່ນມອບຄວາມເປັນເຈົ້າການໃຫ້ແກ່ຊຸມຊົນ ໝາຍວ່າຊຸມຊົນໄດ້ປະກອບສ່ວນທາງດ້ານແຮງງານ ແລະ ວັດຖຸ ທີ່ມີໃນທ້ອງຖິ່ນຂອງເຂົາເຈົ້າ ເພື່ອຈັດຕັ້ງປະຕິບັດໂຄງການ ແລະ ເຮັດໃຫ້ເຂົາເຈົ້າກາຍເປັນ

ເຈົ້າຂອງໂຄງ ການທີ່ແທ້ຈິງ ຊຶ່ງເປັນຜົນກະທົບໂດຍກົງຕໍ່ຄວາມຍືນຍົງຂອງໂຄງການ. ສະນັ້ນ, ການນໍາໃຊ້ແຮງງານຂອງຊຸມຊົນພາຍໃນທ້ອງຖິ່ນເປັນຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍຖືວ່າເປັນສິ່ງທີ່ ທລຍ ໄດ້ໃຫ້ການສະໜັບສະໜູນ ເປັນຕົ້ນແມ່ນບັນດາກິດຈະກໍາທີ່ບໍ່ນໍາໃຊ້ເຕັກນິກໃນການກໍ່ສ້າງ ແມ່ນໃຫ້ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ ແທນທີ່ຈະແມ່ນຜູ້ຮັບເໝົາຈັດຕັ້ງປະຕິບັດທັງໝົດ. ສໍາລັບວັດສະດຸທີ່ນໍາໃຊ້ໃນສິ່ງກໍ່ສ້າງກໍ່ເຊັ່ນດຽວກັນ ວັດສະດຸໃດທີ່ບໍ່ສາມາດຊອກຫາໄດ້ພາຍໃນທ້ອງຖິ່ນ ເຊັ່ນ: ຊີມັງ, ເຫລັກເສັ້ນ, ເຫລັກຕະປູ, ສັງກະສີ, ສີທາ ແລະ ອື່ນໆ ແມ່ນ ທລຍ ຈະເປັນຜູ້ສະໜັບສະໜູນ. ແຕ່ສໍາລັບວັດສະດຸທີ່ມີຢູ່ໃນທ້ອງຖິ່ນຈະແມ່ນຊຸມຊົນເປັນຜູ້ຈັດຫາມາປະກອບສ່ວນເຂົ້າໃນການກໍ່ສ້າງ ເຊັ່ນ: ດິນ, ດິນຊາຍ, ຫີນ, ໄມ້ແບບ, ແຮງງານ ແລະ ອື່ນໆ. ທັງໝົດທີ່ກ່າວມານີ້ເປັນສາເຫດທີ່ເຮັດໃຫ້ຕົ້ນທຶນໃນການຈັດຕັ້ງປະຕິບັດວຽກງານ ທລຍ ແມ່ນຕໍ່າກວ່າທຽບໃສ່ບັນດາຂະແໜງການອື່ນໆ ທີ່ຈັດຕັ້ງປະຕິບັດໜ້າວຽກໃນຂະແໜງການດຽວກັນ.

## 2.4. ຜົນກະທົບຂອງໂຄງການ(Impacts)

ການຈັດຕັ້ງປະຕິບັດບັນດາໂຄງການ ທີ່ສະໜັບໜູນໂດຍກອງທຶນຫລຸດຜ່ອນຄວາມທຸກຍາກໃນໄລຍະຜ່ານມາ ແມ່ນອີງໃສ່ການຕັດສິນໃຈ ແລະ ມອບສິດໃຫ້ຊາວບ້ານໃນການຄັດເລືອກ, ປຶກສາຫາລື, ຕັດສິນໃຈ ແລະ ຮັບຜິດຊອບ ໃນການຈັດຊື້-ຈັດຈ້າງ ແລະ ບໍລິຫານທາງດ້ານການເງິນ ເຊິ່ງເປັນການສ້າງໂອກາດທັງຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ຊາວບ້ານ. ບໍ່ພຽງແຕ່ເທົ່ານັ້ນ ທລຍ ຍັງໄດ້ສ້າງເງື່ອນໄຂເພື່ອອໍານວຍຄວາມສະດວກໃຫ້ຊາວບ້ານຄັດເລືອກຈັດຕັ້ງປະຕິບັດໂຄງການຍ່ອຍດ້ວຍຕົນເອງເຊັ່ນ: ເປັນຜູ້ກະກຽມ ສັນຍາລະຫວ່າງຊຸມຊົນກັບຜູ້ຮັບເໝົາ ພ້ອມດຽວກັນນັ້ນຊາວບ້ານກໍຍັງເປັນຜູ້ຄວບຄຸມທາງດ້ານການເງິນ ເປັນຕົ້ນແມ່ນການເບີກຈ່າຍໃຫ້ແກ່ຜູ່ຮັບເໝົາກໍ່ສ້າງໂດຍກົງ. ບັນດາກິດຈະກໍາທີ່ຂັບເຄື່ອນໂດຍຊຸມຊົນທີ່ກ່າວມາຂ້າງເທິງຍັງບໍ່ມີອົງການໃດໆໃນ ສປປ ລາວ ຈັດຕັ້ງປະຕິບັດມາກ່ອນ. ດັ່ງນັ້ນ, ໃນລະດັບສະພາບໍລິຫານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ຈຶ່ງໄດ້ປຶກສາຫາລື ແລະ ຂໍສະເໜີເພື່ອຍົກລະດັບ ທລຍ ຂຶ້ນເປັນໂຄງການລະດັບຊາດ.

ອີກດ້ານນຶ່ງ, ເພື່ອສະແດງຜົນກະທົບຂອງວຽກງານຂອງ ທລຍ ຕໍ່ກັບຊີວິດການເປັນຢູ່ຂອງຊຸມຊົນ ໃນພື້ນທີ່ເປົ້າໝາຍນັ້ນ ໄດ້ມີການສຶກສາເບິ່ງລະດັບຄາດໝາຍກໍ່ ແລະ ຈຸດປະສົງຂອງໂຄງການກ້າວໄປຫາຜົນກະທົບລະດັບຊາດທີ່ຖືວ່າເປັນບູລິມະສິດສໍາຄັນຂອງລັດຖະບານ. ສະນັ້ນບົດວິເຄາະນີ້ໄດ້ສະແດງໃຫ້ເຫັນວ່າການດໍາເນີນກິດຈະກໍາພາຍໃຕ້ລະບຽບຫລັກການຂອງກອງທຶນຫລຸດຜ່ອນຄວາມທຸກຍາກແມ່ນມີບົດບາດສໍາຄັນເຮັດໃຫ້ຊີວິດການເປັນຢູ່ຂອງຊຸມຊົນມີການປ່ຽນແປງໃນທາງທີ່ດີຂຶ້ນ ເຊິ່ງຜົນກະທົບຂອງແຕ່ລະຂະແໜງການສາມາດສະແດງໃຫ້ເຫັນໂດຍຫຍໍ່ດັ່ງລຸ່ມນີ້:

2.4.1 ດ້ານໂຍທາທິການ ແລະ ພະລັງງານ

ການຕອບສະໜອງເສັ້ນທາງຄົມຄະມະນາຄົມໄດ້ສິ່ງຜົນກະທົບຢ່າງໃຫຍ່ຫລວງ ໃສ່ຫລາຍດ້ານ ມັນໄດ້ກາຍເປັນການສ້າງກາລະໂອກາດໃຫ້ປະຊາຊົນໃນການຈໍລະຈອນສິນຄ້າຂອງເຂົາເຈົ້າ ເປັນຕົ້ນແມ່ນການຂາຍ ແລະ ຊື້ຜະລິດຕະພັນ ໃນຊຸມຊົນຂອງເຂົາເຈົ້າ. ຈາກການເຮັດປະເມີນຄວາມຍືນຍົງຂອງໂຄງການຍ່ອຍໂດຍການສະໜັບສະໜູນຂອງ ທລຍ ໃນເດືອນຕຸລາ 2009 ທີ່ຜ່ານມາ ໂດຍລວມແລ້ວຊາວບ້ານມີຄວາມເພິ່ງ ພໍໃຈ ທີ່ສຸດທີ່ທາງລັດຖະບານໂດຍຜ່ານ ທລຍ ໄດ້ສະໜອງ ເສັ້ນທາງຄົມຄະມະນາຄົມໃຫ້ສາມາດແກ້ໄຂຊີວິດການເປັນຂອງເຂົ້າເຈົ້າໃນທາງກົງ ແລະ ທາງອ້ອມ ເປັນຕົ້ນແມ່ນເຮັດໃຫ້ລາຍຮັບເພີ່ມຂື້ນ ເພາະສາມາດຂາຍຜົນຜະລິດພາຍໃນຊຸມ ຊົນຂອງຕົວເອງ ຫລື ຫລັງຈາກທີ່ມີເສັ້ນທາງສະດວກແລ້ວ ກໍ່ມີພໍ່ຄ້າເຂົ້າໄປຮັບຊື້ຜົນຜະລິດເຖິງບ້ານປະຊາຊົນ ຫລື ບໍ່ດັ່ງນັ້ນຊຸມຊົນກໍ່ສາມາດນຳຜົນຜະລິດຂອງຕົນອອກໄປຂາຍໃນທ້ອງຕະຫລາດ ເຮັດໃຫ້ເຂົາເຈົ້າມີລາຍຮັບເພີ້ມຂື້ນ. ສະນັ້ນຕໍ່ກັບປະເດັນດັ່ງກ່າວສາມາດສະແດງໃຫ້ເຫັນວ່າຊຸມຊົນ ໃນເຂດເປົ້າໝາຍແມ່ນໄດ້ຮັບຜົນປະໂຫຍດທາງກົງ ແລະ ທາງອ້ອມ ຈາກການສະໜອງເສັ້ນທາງຄົມຄະມະນາຄົມທີ່ ທລຍໄດ້ໃຫ້ການສະໜັບສະໜູນ.

2.4.2 ດ້ານສາທາລະນະສຸກ (ການຈັດຫານ້ຳສະອາດ)

ໃນຂະແໜງການນີ້ແມ່ນສາມາດສະຫນອງນ້ຳສະອາດສຳລັບຊົມໃຊ້ ແລະ ບໍລິໂພກໃຫ້ຊຸມຊົນທຸກຍາກ ໄດ້ຕະຫລອດປີ ແລະ ສາມາດ ນຳໃຊ້ໄດ້ງ່າຍດາຍ. ໂຄງການຍ່ອຍການຈັດຫານ້ຳສະອາດສາມາດສ້າງຄວາມເພິ່ງພໍໃຈໃຫ້ແກ່ຊາວບ້ານ ແລະ ສາມາດປະກອບສ່ວນເຂົ້າໃນການຫລຸດຜ່ອນຄວາມທຸກຍາກ ໃຫ້ແກ່ຊຸມຊົນ. ຈາກການເຮັດປະເມີນຄວາມຍືນຍົງຂອງການຊົມໃຊ້ໂຄງການຍ່ອຍໃນເດືອນຕຸລາ 2009 ສະແດງໃຫ້ເຫັນວ່າການທີ່ມີແຫລ່ງນ້ຳສະອາດຢູ່ໃກ້ເຮັດໃຫ້ຊຸມຊົນ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ມີເວລາເຫລືອ ເພື່ອໄປສ້າງເສດຖະກິດຄອບຄົວ ຫລື ຮຽນຫນັງສື. ການຈັດຫານ້ຳສະອາດຍັງມີປະໂຫຍດຢ່າງຫລວງຫລາຍໃນການປັບປຸງຄຸນນະພາບຂອງການດຳລົງຊີວິດ ໂດຍສະເພາະແມ່ນທາງດ້ານສຸຂະອານາໄມຕ່າງໆ.

2.4.3 ດ້ານສາທາລະນະສຸກ (ການສະໜອງສຸກສາລາ)

ຊຸມຊົນມີຄວາມເພິ່ງໃຈຫລາຍຕໍ່ກັບການກໍ່ສ້າງ ແລະ ການສ້ອມແປງສຸກສາລາ ໃນທ້ອງຖິ່ນຂອງເຂົາເຈົ້າ ເນື່ອງຈາກສຸກສາລາໄດ້ກາຍເປັນບ່ອນປິ່ນປົວເວລາເຈັບເປັນທີ່ໃກ້ບ້ານ, ປະຊາຊົນປະຫຍັດເວລາ ແລະ ເງິນທອງເພື່ອເດີນທາງໄປ ໂຮງໝໍເມືອງ ຫລື ແຂວງ. ໃນຫລາຍໂຂງເຂດປະຊາຊົນ

ໃຫ້ເຫດຜົນວ່າວ່າຄ່າໃຊ້ຈ່າຍຈ້າງລົດບັນທຸກຄົນເຈັບໜັກໄປໂຮງໝໍແມ່ນແພງຫລາຍເຮັດໃຫ້ພວກເຂົາຕ້ອງໄດ້ນຳໃຊ້ເງິນທີ່ຕົນເອງປະຫຍັດໄວ້ຫລືເຖິງຂັ້ນຂາຍຊັບສິນຂອງຄອບຄົວ. ສຳລັບຄອບຄົວທຸກຍາກທີ່ສຸດ ທີ່ບໍ່ສາມາດຫາເງິນມາຈ່າຍໄດ້ກໍ່ມີແຕ່ປ່ອຍໃຫ້ຄົນເຈັບຕາຍເທົ່ານັ້ນ.

### 2.4.4 ດ້ານການສຶກສາ

ຕໍ່ກັບວຽກງານການສຶກສາຖືວ່າເປັນບຸລິມະສິດທີ່ສຳຄັນຂອງລັດຖະບານ ແລະ ຖືວ່າເປັນຕົວຊີ້ວັດທີ່ມີຜົນກະທົບທີ່ສຳຄັນຕໍ່ວຽກງານແນວຄິດກັບການຕໍ່ສູ້ກັບຄວາມທຸກຍາກ. ສິ່ງພົ້ນເດັ່ນສຳລັບວຽກງານການສຶກສາຕະຫລອດໄລຍະເວລາ 4 ຫາ 5 ປີ ທີ່ຊຸມຊົນ ຫລື ບ້ານເປົ້າໝາຍໄດ້ຮັບການສະໜັບສະໜູນໃນການກໍ່ສ້າງ ແລະ ສ້ອມແປງໂຮງຮຽນເປັນຕົ້ນແມ່ນໂຮງຮຽນປະຖົມ ເຊິ່ງໄດ້ເຮັດໃຫ້ຈຳນວນນັກຮຽນເພີ່ມຂຶ້ນປະມານ 10% - 20% (ການສຳຫລວດໃນເດືອນຕຸລາ 2009). ໂດຍສະເລ່ຍໃນແຕ່ລະປີ ແລະ ມີແນວໂນ້ມທີ່ຈະເພີ່ມຂຶ້ນໃນປີຕໍ່ໆໄປ. ຜົນໄດ້ຮັບດັ່ງກ່າວມັນໄດ້ເຮັດໃຫ້ຈຳນວນອັດຕາການກືກໜັງສືຂອງຊຸມຊົນໃນແຕ່ລະທ້ອງຖິ່ນຫລຸດລົງເທື່ອລະກ້າວ.

### 2.4.5 ດ້ານກະສິກຳ (ລະບົບຊົນລະປະທານ)

ການຕອບສະໜອງກ່ຽວກັບຊົນລະປະທານໃຫ້ແກ່ຊຸມຊົນທີ່ທຸກຍາກຖືວ່າເປັນບາດກ້າວນຶ່ງທີ່ສຳຄັນໃຫ້ແກ່ຂະບວນການຜະລິດຂອງຊຸມຊົນໃນເຂດທຸກຍາກ ເປັນການຮັບປະກັນທາງດ້ານສະບຽງອາຫານໃຫ້ແກ່ຊຸມຊົນ ພ້ອມດຽວກັນນັ້ນການກໍ່ສ້າງຊົນລະປະທານສຳລັບວຽກງານ ກະສິກຳ ຖືວ່າໄດ້ອຳນວຍຄວາມສະດວກໃຫ້ແກ່ວຽກງານກະສິກຳ ແລະ ການຜະລິດເປັນສິນຄ້າ ເຮັດໃຫ້ຜົນຜະລິດ ເຊິ່ງໄດ້ກາຍເປັນບໍ່ເກີດຂອງລາຍຮັບຂອງຊຸມຊົນ. ຈາກການລົງສຳຫລວດໃນເດືອນຕຸລາ 2009 ຂອງທີມງານທີ່ກ່ຽວຂ້ອງເຫັນໄດ້ວ່າຊຸມຊົນແມ່ນມີຄວາມເພິ່ງພໍໃຈຕໍ່ການຊ່ວຍເຫລືອຂອງລັດຖະບານຜ່ານ ທລຍ ແລະ ເຂົາເຈົ້າໄດ້ເອົາໃຈໃສ່ໃນການບຳລຸງຮັກສາ ເພື່ອເຮັດໃຫ້ສິ່ງກໍ່ສ້າງດັ່ງກ່າວໄດ້ຖືກນຳໃຊ້ຍາວນານທີ່ສຸດ.

### 2.4.6 ສິ່ງແວດລ້ອມ

ການປູກຈິດສຳນຶກໃຫ້ຊຸມຊົນມີຄວາມເປັນເຈົ້າການໃນການປົກປັກຮັກສາສິ່ງແວດລ້ອມຖືວ່າເປັນກິດຈະກຳນຶ່ງທີ່ ທລຍ ໄດ້ໃຫ້ການສະໜັບສະໜູນ ເພາະວຽກງານດັ່ງກ່າວຖືວ່າເປັນວຽກງານບູລິມະສິດຂອງລັດຖະບານ ທັງນີ້ກໍ່ຍ້ອນວ່າສິ່ງແວດລ້ອມ ຕິດພັນກັບຊີວິດການເປັນຢູ່ຕົວຈິງຂອງຄົນໃນ

ສັງຄົມ ຫາກສິ່ງແວດລ້ອມຖືກທຳລາຍຫລາຍກໍ່ຈະສົ່ງຜົນກະທົບດ້ານລົບຕໍ່ການດຳລົງຊີວິດ ເພາະມັນຈະເປັນບໍ່ເກີດແຫ່ງໄພພິບັດຕ່າງໆ ເຊັ່ນ: ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ພະຍຸຕ່າງໆ. ສະນັ້ນ, ເຖິງແມ່ນກິດຈະກຳກ່ຽວກັບການປົກປັກຮັກສາສິ່ງແວດລ້ອມທີ່ ທລຍ ໄດ້ໃຫ້ການສະໜັບສະໜູນເປັນກິດຈະກຳຂະໜາດນ້ອຍກໍ່ຕາມ ແຕ່ກິດຈະກຳດັ່ງກ່າວນີ້ໄດ້ເປັນສິ່ງລິເລີ້ມກ່ຽວກັບການເສີມສ້າງຄວາມເຂົ້າໃຈ ແລະ ຄວາມຮູ້ກ່ຽວກັບການອະນຸລັກ ແຫລ່ງຊັບພະຍາກອນທຳມະຊາດ ແລະ ຈະເປັນຜູ້ສະຫງວນ ແລະ ຮັກສາແຫລ່ງຊັບພະຍາກອນໃຫ້ຢູ່ໃນສະພາບທີ່ສົມບູນທີ່ສຸດ.

ຈາກທັງໝົດທີ່ກ່າວມາແລ້ວນັ້ນ ເຮົາສາມາດເວົ້າໄດ້ໂດຍຫຍໍ້ວ່າ ການດຳເນີນວຽກງານຜ່ານລະບຽບຫລັກການຂອງ ທລຍ ໂດຍສະເພາະການພັດທະນາທີ່ໃຫ້ຊຸມຊົນມີສ່ວນຮ່ວມຫລາຍທີ່ສຸດແມ່ນເປັນສິ່ງສຳຄັນໃນການສ້າງໃຫ້ຊຸມຊົນມີຄວາມເຂັ້ມແຂງ ສາມາດເພິ່ງຕົນເອງ ກຸ້ມຕົນເອງ ແລະ ເປັນຜູ້ຊອກຫາວິທີທາງເພື່ອຕໍ່ສູ້ກັບຄວາມທຸກຍາກດ້ວຍຕົນເອງ ແທນທີ່ຈະເປັນການລໍຄອຍແຕ່ພາກສ່ວນອື່ນຊ່ວຍເຫລືອເທົ່ານັ້ນ. ພ້ອມດຽວກັນນັ້ນກໍ່ເປັນວຽກງານນຶ່ງທີ່ຖືວ່າສອດຄ່ອງກັບແຜນນະໂຍບາຍຂອງພັກ ແລະ ລັດຖະບານໃນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດເປັນຕົ້ນແມ່ນການພັດທະນາທີ່ຖືກຂັບເຂື່ອນໂດຍຊຸມຊົນ ທີ່ຖືວ່າເປັນວຽກງານທີ່ສຳຄັນຫລາຍສຳລັບການພັດທະນາໃນປະຈຸບັນ.

## 2.5. ຄວາມຍືນຍົງຂອງໂຄງການ(Sustainabilty)

ຄວາມຍືນຍົງຂອງໂຄງການແມ່ນໄດ້ຕິດພັນໂດຍກົງກັບຜົນກະທົບໄລຍະຍາວຂອງໂຄງການກໍ່ສ້າງດ້ານພື້ນຖານໂຄງລ່າງ ທັງນີ້ກໍ່ຍ້ອນການເວລາ ແລະ ການຊົມໃຊ້ ຖືວ່າແມ່ນຕົວຊີ້ວັດທີ່ສຳຄັນທີ່ກະທົບໂດຍກົງ ຕໍ່ສະພາບຂອງສິ່ງກໍ່ສ້າງທີ່ ທລຍ ໄດ້ໃຫການສະໜັບສະໜູນໃນໄລຍະຜ່ານມາ ແຕ່ບັນຫາດັ່ງກ່າວກໍ່ຂື້ນກັບຄວາມເປັນເຈົ້າການ ແລະ ຄວາມສາມາດຂອງຊຸມຊົນໃນເຂດເປົ້າໝາຍທີ່ ທລຍ ໄດ້ໃຫ້ການສະໜັບສະໜູນ.

ການດຳເນີນກິດຈະກຳຂອງວຽກງານ ທລຍ ໃນການຄັດເລືອກໂຄງການຍ່ອຍ ແມ່ນເນັ້ນໃສ່ການມີສ່ວນຮ່ວມຈາກຊຸມຊົນໃນທຸກລະດັບ ນັບແຕ່ການເກັບກຳຂໍ້ມູນຂັ້ນບ້ານ, ການຈັດລຽງບູລິມະສິດຄວາມຕ້ອງການ, ການອອກແບບ, ການປະເມີນຜົນ, ການຈັດຊື້-ຈັດຈ້າງ, ການຈັດຕັ້ງປະຕິບັດ ແລະ ການບົວລະບັດຮັກສາ. ຂະບວນການມີສ່ວນຮ່ວມດັ່ງກ່າວຖືວ່າມີບົດບາດສຳຄັນ ເພື່ອໃຫ້ຊຸມ

ຊຸມຊົນມີຄວາມຮູ້ສຶກວ່າເຂົາເຈົ້າເປັນເຈົ້າຂອງໂຄງການກໍ່ສ້າງເຫລົ່ານັ້ນ ເຮັດໃຫ້ເຂົາເຈົ້າເອົາໃຈໃສ່ໃນການບູລະນະ ແລະ ບຳລຸງຮັກສາ ເຊິ່ງເປັນບໍ່ເກີດຂອງຄວາມຍືນຍົງ.

ຄວາມເປັນເຈົ້າການຂອງຊຸມຊົນ ໃນການບຳລຸງຮັກສາແມ່ນໄດ້ຕິດພັນໂດຍກົງກັບຄວາມຍືນຍົງຂອງໂຄງການ. ຈາກການປະເມີນກ່ຽວກັບຄວາມຍືນຍົງຂອງໂຄງການໃນເດືອນ ຕຸລາ 2009 ຊຶ່ງຜົນຂອງການສຶກສາໄດ້ສະແດງໃຫ້ເຫັນວ່າສອງອົງປະກອບແມ່ນມີການພົວພັນກັນຢ່າງສະໜິດແໜ້ນ ຫາກຊຸມຊົນເພີ້ມຄວາມເອົາໃຈໃສ່ໃນການບຳລຸງຮັກສາ ກໍ່ຈະເຮັດໃຫ້ຄວາມຍືນຍົງຂອງການຊົມໃຊ້ໂຄງການເພີ່ມຂື້ນເທົ່ານັ້ນ. ມັນສະແດງອອກບ່ອນວ່າບ້ານໃດທີ່ຊຸມຊົນມີຄວາມກະຕືລືລົ້ນ ໃນການບຳລຸງຮັກສາສິ່ງກໍ່ສ້າງ ແລະ ອຳນາດການປົກຄອງບ້ານມີຄວາມເຂັ້ມແຂງເຮັດໃຫ້ສະພາບຂອງສິ່ງກໍ່ສ້າງແມ່ນຢູ່ໃນສະພາບດີ ແລະ ຮັບປະກັນຄວາມຍືນຍົງໃນການຊົມໃຊ້ໃຫ້ໄດ້ຍາວນານທີ່ສຸດ.

# 3. ບົດສະຫລຸບຫຍໍ້ ແລະ ຂໍ້ສະເໜີ

## 3.1. ບົດສະຫລຸບຫຍໍ້

ຜົນຈາກການວິເຄາະໂດຍການນຳໃຊ້ຕົວຊີ້ວັດຄືທີ່ກ່າວມາຂ້າງເທິງໄດ້ຊີ້ໃຫ້ເຫັນແລ້ວວ່າການຈັດຕັ້ງປະຕິບັດວຽກງານ ທລຍ ແມ່ນມີບົດບາດສຳຄັນໃນການປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃນເຂດເປົ້າໝາຍ, ໂດຍສະເພາະຊຸມຊົນທີ່ທຸກຍາກຖືວ່າໄດ້ຮັບຜົນປະໂຫຍດໂດຍກົງຈາກວຽກງານດັ່ງກ່າວ, ຫລາຍກວ່າ 65% ຂອງຈຳນວນບ້ານທີ່ໄດ້ຮັບຜົນປະໂຫຍດທັງໝົດເປັນບ້ານທຸກຍາກແທ້ໆ. ການດຳເນີນກິດຈະກຳພາຍໃຕ້ວຽກງານຂອງ ທລຍ ຖືວ່າມີຄວາມສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານເປັນຕົ້ນແຜນກ່ຽວກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດຄືການປັບປຸງພື້ນຖານໂຄງລ່າງໃຫ້ກັບຊຸມຊົນທຸກຍາກ ໄດ້ກາຍເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າໃນການເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ. ມັນສະແດງອອກບ່ອນວ່າ 66.5 % ຂອງຈຳນວນໂຄງການທັງໝົດທີ່ ທລຍ ໄດ້ໃຫ້ການຊ່ວຍເຫລືອຕະຫລອດ 6 ປີແມ່ນໄດ້ຖືກຈັດຕັ້ງປະຕິບັດໂດຍຊຸມຊົນ ຊຶ່ງເປັນຫລັກຖານວ່າປະຊາຊົນໄດ້ເຂົ້າຮ່ວມ ແລະ ເປັນການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນຢ່າງແທ້ຈິງ. ການສ້າງຂີດຄວາມສາມາດໃຫ້ເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນຢູ່ໃນຊຸມຊົນດ້ວຍຕົນເອງ ຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສເປັນຫລັກການເຄື່ອນໄຫວວຽກງານໃນແຕ່ລະຂະແໜງການທີ່ ທລຍ ໄດ້ໃຫ້ການສະໜັບສະໜູນ ຖືວ່າຕອບສະໜອງໄດ້ ຄວາມຮຽກຮ້ອງຕ້ອງການຂອງພໍ່ແມ່ປະຊາຊົນ ແລະ ເຮັດໃຫ້ຊີ

ວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນ. ຊຸມຊົນມີຄວາມພາກພູມໃຈ ແລະ ຮູ້ບຸນຄຸນຕໍ່ການສະໜັບສະໜູນຂອງລັດຖະບານຜ່ານ ທລຍ ຜົນໄດ້ຮັບທັງໝົດທີ່ກ່າວມາຂ້າງເທິງນີ້ ໄດ້ຢັ້ງຢືນຜົນສຳເລັດຂອງການປະຕິບັດແນວທາງນະໂຍບາຍ ແລະ ຄາດ ໝາຍສູ້ຊົນທີ່ພັກ ແລະ ລັດຖະບານໄດ້ວາງອອກໃນແຕ່ລະໄລຍະທັງເປັນການຊີ້ໃຫ້ເຫັນວ່າປະຊາຊົນລາວມີຄວາມຕື່ນຕົວສະໝັກໃຈ ທັງສາມາດຂັບເຄື່ອນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກເປັນຢ່າງດີ.

## 3.2. ບາງຂໍ້ສະເໜີ

ເພື່ອຮັບປະກັນປະສິດທິພາບຂອງການລົງທຶນເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນລາວບັນດາເຜົ່າ ດຳເນີນໄປດ້ວຍບາດກ້າວທີ່ໜັກແໜ້ນຕໍ່ເນື່ອງ, ການຍົກລະດັບ ທລຍ ໃຫ້ເປັນໂຄງການລະດັບຊາດ ເພື່ອເປັນເຄື່ອງມືຈັດຕັ້ງປະຕິບັດຂະບວນການສ້າງບ້ານ ແລະ ກຸ່ມບ້ານພັດທະນາໄປຕາມ 4 ເນື້ອໃນ 4 ຄາດໝາຍຂອງກົມການເມືອງສູນກາງພັກ ແມ່ນການພັດທະນາຊົນນະບົດຮອບດ້ານ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ກວາມເອົາທຸກພື້ນທີ່ທຸກຍາກໃນທຸກພາກທົ່ວປະເທດ. ການສ້າງແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແມ່ນໜ້າທີ່ວຽກງານອັນໜັກໜ່ວງສຳລັບທີມງານບໍລິຫານ ທລຍ ໃນແຕ່ລະຂັ້ນ ທີ່ເຕັມໄປດ້ວຍສິ່ງທ້າທາຍ ແລະ ກາລະໂອກາດ. ຕໍ່ບັນຫາດັ່ງກ່າວມັນຮຽກຮ້ອງໃຫ້ເພີ່ມຂອດການປະສານສົມທົບຈາກຫລາຍພາກສ່ວນ ທັງພາກລັດ ແລະ ເອກະຊົນ ໃນ ສ ປ ປ ລາວ. ເພາະສ່ວນນຶ່ງຂອງຜົນສຳເລັດຂອງວຽກງານ ທລຍ ແມ່ນ ການປະສານສົມທົບລະຫວ່າງອຳນາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງ ທີ່ຖືວ່າເປັນປັດໃຈທີ່ສຳຄັນ ເຮັດໃຫ້ວຽກງານ ທລຍ ສຳເລັດຕາມກຳນົດເປົ້າໝາຍໃນໄລຍະຜ່ານມາ. ພ້ອມດຽວກັນນັ້ນ, ການນຳເອົາບັນຫາກໍ່ຄືຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເພື່ອທຳການວິເຄາະ ແລະ ເປັນບົດຮຽນໃນການດຳເນີນວຽກງານຈະເຮັດໃຫ້ ທລຍ ສາມາດບັນລຸຄາດໝາຍສູງສຸດຂອງການລົງທຶນໄດ້.

## ສຶກສາດີ ມີຄວາມຮູ້, ດຸໝັ່ນ, ຊື່ສັດ, ປະຫຍັດ, ອົດທົນ

## ພາທຸກຄົນພົ້ນທຸກ